International Labour Organization | ILO/Korea Partnership Programme

ILO brief

# ຊາວກະສິກອນທີ່ກຸ້ມຕົນເອງ

ມັງກອນ 2023

ຢູ່ ສປປ ລາວ, ຊາວກະສິກອນທີ່ກຸ້ມຕົນເອງ (ຜູ້ທີ່ຜະລິດເພື່ອນຳໃຊ້ ແລະ ບໍລິໂພກເອງ) ມີຈຳນວນຫຼາຍ. ຄາດຄະເນປະມານ 1,5 ລ້ານຄົນ, ຫຼື ກວມເອົາປະມານ 53% ຂອງຈຳນວນປະຊາກອນໃນເກນເຮັດວຽກທັງໝົດ ແລະ ຖືກຈັດຢູ່ນອກກຳລັງແຮງງານ. ໂດຍລວມແລ້ວ, ມີຫຼາຍກວ່າ 1.4 ລ້ານຄົນທີ່ເປັນກຳລັງແຮງງານທີ່ບໍ່ແມ່ນ ລັດຖະກອນ.

ແຮງງານເຫຼົ່ານີ້ມີຄວາມສຳຄັນດ້ວຍສອງເຫດຜົນຕົ້ນຕໍດັ່ງນີ້:

- ເຫດຜົນທີ່ໜຶ່ງແມ່ນ, ໃນພາກປະຕິບັດ ແລະ ຄວາມເປັນຕົວຈິງ, ເປັນການຍາກທີ່ຈະຈຳແນກແຮງງານເຫຼົ່ານີ້ຈາກຊາວກະສິກອນຜູ້ອື່ນໆທີ່ປະກອບສ່ວນໃນການສ້າງເສດຖະກິດ. ເຂົາເຈົ້າມີແນວໂນ້ມທີ່ ຈະເຂົ້າຮ່ວມກິດຈະກຳສ້າງເສດຖະກິດໃນບາງຊ່ວງເວລາຂອງປີ, ຕົວຢ່າງນອກລະດູການຜະລິດກະສິກຳ. ນີ້ໝາຍຄວາມວ່າຂະໜາດຂອງກຸ່ມນີ້ຈະແຕກຕ່າງກັນໄປຕາມເວລາທີ່ດຳເນີນການສຳຫຼວດ. ການເກັບກຳຂໍ້ມູນໃນການສຳຫຼວດກຳລັງແຮງງານ 2017 ໄດ້ດຳເນີນໃນລະຫວ່າງກາງເດືອນກໍລະກົດຫາທ້າຍເດືອນສິງຫາ 2017, ເຊິ່ງເປັນຊ່ວງລະດູການ ຜະລິດກະສິກຳ.

- ເຫດຜົນທີສອງແມ່ນ, ເນື່ອງຈາກລັກສະນະສະເພາະຂອງເຂົາເຈົ້າມີແນວໂນ້ມທີ່ຈະຕ້ອງການມີບາງຮູບແບບຂອງການປົກປ້ອງ ຫຼື ການຊ່ວຍເຫຼືອທາງສັງຄົມ. ຫຼາຍກວ່າເຄິ່ງໜຶ່ງ (53%) ຂອງຊາວກະສິກອນກຸ່ມນີ້ແມ່ນແມ່ຍິງ, ແລະ ເຂົາເຈົ້າຍັງຖືກຈັດຢູ່ໃນເງື່ອນໄຂໃນການກະຈາຍລາຍໄດ້ຕ່ຳກວ່າ -38% ມີລາຍໄດ້ຕ່ຳກວ່າມາດຕະຖານ ແລະ ສອງສ່ວນສາມແມ່ນຕົກຢູ່ໃນກຸ່ມທີ່ມີລາຍຮັບຕ່ຳ. ລາຍຮັບສະເລ່ຍຕໍ່ເດືອນຂອງຊາວກະສິກອນກຸ່ມນີ້ຍັງຄົງຢູ່ປະມານ 2/3 ຂອງກຳລັງແຮງງານດ້ານເສດຖະກິດ. ສິບສີ່ສ່ວນຮ້ອຍຂອງຊາວກະສິກອນເຫຼົ່ານີ້ມີໜີ້ສິນທີ່ຍັງຄ້າງຈ່າຍ, ມີອັດຕາສ່ວນສູງກວ່າກຳລັງແຮງງານທັງໝົດ (13%). 100% ຂອງຊາວກະສິກອນກຸ່ມນີ້ຄາດວ່າຈະບໍ່ໄດ້ຮັບການຄຸ້ມຄອງຈາກປະກັນສັງຄົມ.



ບົດສະຫຼຸບຫຍໍ້ຂອງອົງການແຮງງານສາກົນແມ່ນສ່ວນໜຶ່ງຂອງຜົນການສຶກສາດ້ານປະລິມານຂອງກຳລັງແຮງງານ ແລະ ໂຄງສ້າງດ້ານວິສາຫະກິດໃນ ສປປ ລາວ ເພື່ອເຂົ້າໃຈເລິກເຊິ່ງກ່ຽວກັບພາບລວມຂອງແຮງງານນອກລະບົບເພື່ອນຳມາສູ່ການອອກແບບນະໂຍບາຍປະກັນສັງຄົມ. ການສຶກສາຄັ້ງນີ້ແມ່ນໄດ້ຮັບທຶນສະໜັບສະໜູນຈາກໂຄງການຮ່ວມມືຂອງອົງການແຮງງານສາກົນ ແລະ ສ. ເກົາຫຼີ ແລະ ດຳເນີນການສຶກສາໂດຍສະຖາບັນຄົ້ນຄ້ວາດ້ານການຄຸ້ມຄອງນະໂຍບາຍອອດສຟອດ.

ໂດຍການຮ່ວມມືກັບ


ລາຍລະອຽດການຕິດຕໍ່

**ສຳນັກງານອົງການແຮງງານສາກົນສຳລັບພາກພື້ນອາຊີ ແລະ ປາຊີຟິກ**

ຕຶກສະຫະປະຊາຊາດ, ຖະໜົນລາດສະດຳເນີນນອກ, ບາງກອກ 10200, ຣາຊະອານາຈັກໄທ

ໂທລະສັບ: +66 2288 1234
ແຟັກ: +66 2280 1735
ອີເມວ: BANGKOK@ilo.org

| | | | |
|---|---|---|---|
| ນາງ ເລີບລີນ ເດ | ຜູ້ຈັດການໂຄງການ | ອີເມວ: | del@ilo.org |
| ທ. ທອງເຫຼັກ ຊີງ | ຜູ້ປະສານງານໂຄງການ | ອີເມວ: | thongleck@ilo.org |
| ນ. ນຸດທອງ ອາລຸນທອງ | ຜູ້ປະສານງານໂຄງການ | ອີເມວ: | alounthong@ilo.org |


© ອົງການແຮງງານສາກົນ 2023